# ຄອບຄົວສັນຍາ ບໍ່ໃຫ້ມີການຮຸນແຮງ

ການສ້າງຄວາມສງົບສຸກນັ້ນຕ້ອງເລີ້ມຈາກຕົວພວກເຮົາເອງ ແລະ ຄອບຄົວຂອງພວກເຮົາ. ແຕ່ລະຄົນໃນຄອບຄົວຂອງ ______________________, ຕົກລົງຈະປະຕິບັດສຸດຄວາມສາມາດເພື່ອໃຫ້ພວກເຮົາສາມາດກາຍເປັນຄົນບໍ່ມີຄວາມຮຸນແຮງ ແລະ ເປັນຄົນທີ່ມີຄວາມສງົບ:

### ຈະເຄົາຣົບນັບຖືຕົນເອງ ແລະ ຜູ້ອື່ນໆ

ຈະເຄົາຣົບນັບຖືຕົນເອງ, ໃຫ້ຄົນອື່ນຮູ້ວ່າເຮົາຮັບຮູ້ເຂົາ ແລະ ຫລີກເວັ້ນຄຳກ່າວຮ້າຍຕິຕຽນທີ່ສະແດງເຖິງຄວາມບໍ່ຫວັງດີ, ຄຳເວົ້າທີ່ກຽດຊັງ, ການທຳລາຍດ້ານຮ່າງກາຍ ແລະ ການປະພຶດທີ່ທຳລາຍຕົນເອງ.

### ຈະໂອ້ລົມຕິດຕໍ່ກັນໃຫ້ດີຂຶ້ນ

ຈະເລົ່າຄວາມຮູ້ສຶກຂອງຕົນດ້ວຍຄວາມຈິງ, ຈະຫາວິທີລະບາຍຄວາມໃຈຮ້າຍອອກໃນວິທີສງົບປອດໄພ, ແລະ ຈະທຳການແກ້ໄຂບັນຫາແບບສງົບສຸກ.

### ຈະຮັບຟັງ

ຈະຟັງດ້ວຍຄວາມເອົາໃຈໃສ່ຕໍ່ກັນແລະກັນ, ໂດຍສະເພາະກັບຜູ້ທີ່ບໍ່ຕົກລົງເຫັນດີກັບຕົນນັ້ນ, ແລະ ຮັບຮູ້ ເຖິງຄວາມຮູ້ສຶກ ແລະ ຄວາມຕ້ອງການຂອງຄົນອື່ນແທນທີ່ຈະຖູໄຖໃສ່ແຕ່ໃນວິທີຂອງຕົນເອງ.



### ຈະໃຫ້ອາພັຍ

ຈະຂໍອາພັຍ ແລະ ແກ້ໄຂປ່ຽນແປງ ເມື່ອຕົນເຮັດໃຫ້ຜູ້ອື່ນເສັຽໃຈ, ຈະໃຫ້ອາພັຍແກ່ຜູ້ອື່ນ, ແລະ ຈະບໍ່ອົມຄວາມຄຽດຂຶ້ງນັ້ນໄວ້.

### ຈະເຄົາຣົບນັບຖືທັມຊາດ

ຈະໃຫ້ການປະຕິບັດຮັກສາ ສິ່ງແວດລ້ອມ ແລະ ສິ່ງທີ່ມີຊີວິດທຸກໆຢ່າງ, ລວມທັງສັດລ້ຽງຢູ່ໃນບ້ານຂອງພວກເຮົາ.



### ຈະຫລິ້ນດ້ວຍຄວາມສລາດ

ຈະເລືອກການມ່ວນຊື່ນ ແລະ ເຄື່ອງຂອງຫລິ້ນ ທີ່ໃຫ້ຄຸນປະໂຍດແກ່ຄອບຄົວຂອງພວກເຮົາ ແລະ ຈະຫລີກເວັ້ນຈາກການມ່ວນຊື່ນຕື່ນເຕັ້ນທີ່ມີຄວາມຮຸນແຮງ, ຫລື ຈະມ່ວນຊື່ນໃນສິ່ງທີ່ເໝາະສົມ.

### ຈະທຳການຊຸກຍູ້

ຈະທຳການຕໍ່ວ່າທຸກໆຮູບການຮຸນແຮງທີ່ຂ້ອຍພົບເຫັນ, ຈະແມ່ນຢູ່ບ້ານ, ຢູ່ໂຮງຮຽນ, ຢູ່ບ່ອນເຮັດການ, ຫລື ຢູ່ໃນສັງຄົມທົ່ວໄປ, ແລະ ຈະຢືນຢັນຊ່ອຍເຫລືອຜູ້ອື່ນໆທີ່ຖືກຂະທຳແບບບໍ່ຍຸຕິທັມ.

ນີ້ແມ່ນສັນຍາຂອງພວກຂ້ອຍ. ນີ້ແມ່ນຈຸດໝາຍຂອງພວກຂ້ອຍ. ພວກຂ້ອຍຈະສຳຣວດກວດກາເບິ່ງຕົວເອງວ່າໄດ້ປະຕິບັດຕາມສັນຍານີ້ເດືອນລະນຶ່ງເທື່ອ ໃນ ______________________ ສຳລັບ ສິບສອງເດືອນຂ້າງໜ້ານີ້ ເພື່ອໃຫ້ມີຄວາມສາມາດຊ່ອຍເຫລືອຊຶ່ງກັນແລະກັນໃຫ້ກາຍເປັນຄົນສງົບສຸກຂຶ້ນ.

ລາຍເຊັນສັນຍາຂອງຄອບຄົວລຸ່ມລົງໄປນີ້:

______________________________ ______________________________

______________________________ ______________________________

______________________________ ______________________________

______________________________ ______________________________

*"ກຳຈັດຄວາມຮຸນແຮງອອກ, ໄປເທື່ອລະຄອບຄົວ, ເລີ້ມຈາກຄອບຄົວພວກເຮົາກ່ອນ."*